ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 005/ສອສ.ອທອ

ວັນທີ 10/1/17

# ແຈ້ງການ

**ເຖິງ:** ບັນດາພະແນກ, ສາຂາ ອທອ ປະຈຳແຂວງ ແລະ ສະມາຊິກ ສອສ.

**ເລື່ອງ:** ການປັນຜົນ 6 ເດືອນທ້າຍປີ 2016, ການໃຫ້ກູ້ຢືມ, ການປ່ຽນແປງຮຸ້ນງວດ 6 ເດືອນຕົ້ນປີ 2017.

- ອີງຕາມ ກົດລະບຽບພາຍໃນຂອງສະຫະກອນ ອອມຊັບ-ສິນເຊື່ອ ອທອ ສະບັບເລກທີ: 005/ສອສ, ລົງວັນທີ 28/01/2013.
- ອີງຕາມ ໃບແຈ້ງການ ຂອງ ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຕາມໃບແຈ້ງການ ສະບັບເລັກທີ 554/ກຄສງ, ລົງວັນທີ 13/12/2016 ວ່າດ້ວຍການຢັ້ງຢືນຄວາມຖືກຕ້ອງການບັນຊີ ກ່ອນຈ່າຍເງິນປັນຜົນໃຫ້ສະມາຊິກ.

ຜູ້ອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກ,ສາຂາ ອທອ ປະຈຳແຂວງ ເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບ ການປັນຜົນ 6 ເດືອນທ້າຍ ປີ 2016 ການໃຫ້ກູ້ຢືມ,ການເພີ້ມ, ຫຼຸດ, ຖອນຮຸ້ນ ໃນງວດ 6 ເດືອນຕົ້ນປີ 2017 ດັ່ງນີ້ :

1. <u>ການປ່ຽນແປງຮຸ້ນ:</u>

1.1 ເປີດຮັບສະໝັກສະມາຊິກ ສອສ ໃໝ່ ທີ່ມີເງື່ອນໄຂດັ່ງນີ້: ພະນັກງານຖາວອນ, ພະນັກງານທົດລອງວຽກ.

1.2 ການຖອກຮຸ້ນ: ຕ່ຳສຸດ 1 ຮຸ້ນ = 10,000 ກີບ/ຄົນ/ເດືອນ ແລະ ສູງສຸດ 50 ຮຸ້ນ = 500,000 ກີບ ຄົນ/ເດືອນ.

1.3 ການຖອນຮຸ້ນ: ໃຫ້ສະມາຊິກຮັກສາຮຸ້ນໄວ້ນຳ ສອສ ບໍ່ໃຫ້ຫຼຸດ 10 ຮຸ້ນ =100,000 ກີບ.

1.4 ສະມາຊິກຜູ້ທີ່ມີຈຸດປະສົງຖອນຮຸ້ນ ຫຼື ເພີ້ມ/ຫຼຸດ ໃຫ້ປະກອບແບບຟອມ ສົ່ງໃຫ້ ທ່ານ ນ. ສີສຸພັນ ແກ້ວມະນີວົງ ຂາເຂົ້າ-ຂາອອກ ຂອງ ສອສ ຜ່ານລະບົບ Report ໃໝ່ພະແນກ ບໍລິຫານ, ເບີໂທ 22210090, ເລີ້ມແຕ່ ວັນທີ 11-16/01/2017, ສະມາຊິກ ສອສ ສາມາດກວດຮຸ້ນສະສົມໄດ້ທີ່ທາງ Website: scc.etllao.com.

1.6 ກຳນົດການຈ່າຍເງິນຖອນຮຸ້ນ ພາຍຫລັງການອະນຸຍາດຈ່າຍເງິນປັນຜົນ ຈາກທະນາຄານ ແຫ່ງ ສປປ ລາວ.

1.7 ກໍລະນີພະນັກງານຂອງທ່ານຫາກອອກໄປປະຕິບັດວຽກງານຢູ່ຕ່າງແຂວງໃນໄລຍະປະກາດການເພີ້ມ/ຫຼຸດ ແລະ ສະໝັກ ໃໝ່ ແມ່ນໃຫ້ທ່ານພົວພັນຫາສະມາຊິກຂອງທ່ານໃຫ້ປະກອບແບບຟອມໃຫ້ທັນເວລາດັ່ງກ່າວ. ຖ້າຊັກຊ້າຖືວ່າສະລະສິດ.

2. <u>ການກູ້ຢືມ:</u>

**2.1 ກູ້ຢືມແບບປົກກະຕິ:**

- ເງິນເດືອນຄ້ຳປະກັນ: ວົງເງິນກູ້ສູງສຸດ 60 ລ້ານກີບ/ສັນຍາ, ດອກເບ້ຍ 1,56 %/ເດືອນ ຫລື 0,052%ຕໍ່ວັນ , ໄລຍະເວລາ 18 ເດືອນ.

- ຫລັກຊັບ(ດິນ, ຮຸ້ນສະສົມ)ຄໍ້າປະກັນ: ວົງເງິນກູ້ສູງສຸດ 60 ລ້ານກີບ/ສັນຍາ,ດອກເບ້ຍ 1,56 %/ເດືອນ  ຫລື 0,052%ຕໍ່ວັນ ໄລຍະເວລາ 30 ເດືອນ.

2.2 ກູ້ຢືມແບບພິເສດ:

- ວົງເງິນສູງສຸດ 100 ລ້ານກີບ, ດອກເບັ້ຍ 1, 7 % /ເດືອນ(ໄລຍະເວລາ 1 ປີ); ດອກເບັ້ຍ 1,8% /ເດືອນ(ໄລຍະເວລາ 2 ປີ).

2.3 ເງື່ອນໄຂເພີ້ມຕື່ມ:

-ການປັບປຸງການຄິດໄລ່ດອກເບ້ຍເງິນກູ້ຈາກເປັນເດືອນມາເປັນການຄິດໄລ່ດອກເບ້ຍເປັນວັນ
- ຄ່າແບບຟອມກູ້ 10,000ກີບ/ສະບັບ.
- ຄ່າທຳນຽມອອກໄປກວດຊັບສິນ 100,000 ກີບ/ສັນຍາ. ໊
- ຄ່າທຳນຽມປ່ຽນແປງຮຸ້ນ 5,000 ກີບ/ສະບັບ.
- ຖ້າປ່ຽນສັນຍາໃໝ່ ແມ່ນຈະເສຍຄ່າທຳນຽມ 0,5% ຂອງ ມູນຄ່າເພີ່ມຂອງສັນຍາ ໃນນັ້ນສັນຍາເກົ່າຕ້ອງ ປະຕິບັດການຊຳລະເກີນເຄິ່ງໜຶ່ງຂອງໄລຍະເວລາສັນຍາ ແລະ ມູນຄ່າເພີ່ມຕ້ອງເກີນ 20 % ຂອງມູນຄ່າຍັງເຫຼືອຂອງສັນຍາເກົ່າ. ສັນຍານຶ່ງອະນຸຍາດໃຫ້ປ່ຽນໃໝ່ໄດ້ພຽງຄັ້ງດຽວ.
- ຄ່າປັບໃໝເງິນກູ້ຕົ້ນທຶນ ແລະ ດອກເບ້ຍທີ່ຊຳລະຊັກຊ້າ 0, 4 % ຕໍ່ວັນຂອງມູນຄ່າຄ້າງຊາລະ.

3. <u>ການປັນຜົນງວດ 6 ເດືອນທ້າຍປີ 2016:</u>

ສຳລັບການປັນຜົນງວດ 6 ເດືອນທ້າຍປີ 2016 ແມ່ນຍັງລໍຖ້າການກວດກາຂອງ ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຕາມໃບແຈ້ງການ ສະບັບເລກທີ 554/ກຄສງ, ລົງວັນທີ 13/12/2016 ວ່າດ້ວຍການຢັ້ງຢືນຄວາມຖືກຕ້ອງການບັນຊີ ກ່ອນຈ່າຍເງິນປັນຜົນໃຫ້ສະມາຊິກ(ລາຍລະອຽດສາມາດເຂົ້າເບິ່ງໃນເວບໄຊ ສອສ).

ສອສ ຈະແຈ້ງລາຍລະອຽດການປັນຜົນໃຫ້ແກ່ສະມາຊິກຊາບ ພາຍຫລັງໄດ້ຮັບການອະນຸມັດຈາກທະນາຄານແຫ່ງ ສປປລາວ.

4. <u>ວິທີຈັດຕັ້ງປະຕິບັດ:</u>

ການໂອນເງິນປັນຜົນຈະໄດ້ປະຕິບັດຕາມເລກບັນຊີທະນາຄານ ຂອງສະມາຊິກ ທີ່ໄດ້ແຈ້ງໃຫ້ ສອສ ຄື: ນະຄອນຫຼວງວຽງຈັນ, ສາຂາແຂວງ ແມ່ນໂອນຜ່ານເລກບັນຊີ ທະນາຄານພັດທະນາລາວ, ສ່ວນພະແນກ ແລະ ສາຂາໃດທີ່ບໍ່ມີເລກບັນຊີ ທະນາຄານພັດທະນາລາວ ຈະໄດ້ໂອນໃສ່ເລກບັນຊີລວມຜູ້ໃດຜູ້ໜຶ່ງ ແລ້ວຈຶ່ງໃຫ້ແຈກກັນຕາມຕົວເລກຂອງແຕ່ລະທ່ານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຜູ່ອຳນວຍການໃຫຍ່ ສອສ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນອອມຊັບ-ສິນເຊື່ອ

ປິ່ງມາລາ ຂຽວວົງພະຈັນ